ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 1806
ນະຄອນຫຼວງວຽງຈັນ, ວັນທີ: 18 ມີຖຸນາ 2025

ຮຽນ: ທ່ານ ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນເພີ່ມເຕີມຂອງກອງປະຊຸມວິສາມັນສະພາບໍລິຫານ ວັນທີ 18 ມີຖຸນາ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ມະຕິສຳຄັນຂອງກອງປະຊຸມສະພາອຳນວຍການ ລົງວັນທີ 28 ມີນາ 2025.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ ຫຼື ບໍລິສັດ) ຂໍຖືເປັນກຽດລາຍງານມາຍັງທ່ານ ຊາບວ່າ ບໍລິສັດໄດ້ຈັດກອງປະຊຸມວິສາມັນຂອງສະພາບໍລິຫານ ເລກທີ 1806/2025 ໃນວັນທີ 18 ມີຖຸນາ 2025 ເວລາ 8:00 ໂມງເຊົ້າ ທີ່ຫ້ອງການບໍລິສັດ ລອຊ ໂດຍການເປັນປະທານຂອງ ທ່ານນາງ Mrs. Yuki Scott ປະທານສະພາອຳນວຍການ ຂອງບໍລິສັດ ລອຊ ແລະ ມີສະມາຊິກສະພາຜູ້ບໍລິຫານເຂົ້າຮ່ວມ 04 ທ່ານ ພ້ອມດ້ວຍຜູ້ບໍລິຫານເຂົ້າຮ່ວມໃນນາມສັງເກດການ.

ກອງປະຊຸມປຶກສາຫາລືເພື່ອຊີ້ແຈ້ງ ແລະ ໄດ້ຕົກລົງບັນຫາສຳຄັນດັ່ງນີ້:

- ຊີ້ແຈງເຫດຜົນ ຄວາມລ້າຊ້າໃນການຈ່າຍເງິນປັນຜົນ: ບໍລິສັດ ລອຊ ບໍ່ສາມາດຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໄດ້ ເນື່ອງຈາກ ບໍລິສັດກຳລັງປະເຊີນກັບການຂາດສະພາບຄ່ອງຂອງທາງການເງິນ ເຊິ່ງເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນຕາມກຳນົດການເດີມ.
- ກອງປະຊຸມໄດ້ຕົກລົງເຫັນດີ ແກ້ໄຂບັນຫານີ້ ໂດຍການກູ້ຍືມເງິນຕ່າງປະເທດ.
- ກອງປະຊຸມໄດ້ຕົກລົງເຫັນດີ ເລື່ອນການຈ່າຍເງິນປັນຜົນອອກໄປກ່ອນ ໂດຍປ່ຽນຈາກວັນທີ **27 ມີຖຸ**ນາ 2025 ມາເປັນວັນທີ **29 ສິງຫາ** 2025 ແລະ ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມປິດບັນຊີຜູ້ຖືຮຸ້ນແຈ້ງການຄັ້ງກ່ອນໜ້ານີ້ແມ່ນຍັງມີສິດໃນການໄດ້ຮັບເງິນປັນຜົນຄືເກົ່າ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ.

ດ້ວຍຄວາມນັບຖືຢ່າງສູງ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ທ່ານ Yoshihito Oshima

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ
LAO ASEAN LEASING PUBLIC COMPANY